ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສຳນັກງານຂໍ້ມູນຕ້ານການຟອກເງິນ

ເລກທີ 742/ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 25 MAY 2022

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ບໍລິສັດຫລັກຊັບ ແລະ ບໍລິສັດປະກັນໄພ ທີ່ນັບຖື,

**ເລື່ອງ:** ການປັບປຸງຮູບແບບການສົ່ງລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ ຜ່ານລະບົບລາຍງານອອນລາຍ.

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ ສະບັບເລກທີ 417/ທຫລ, ລົງວັນທີ 05 ມິຖຸນາ 2015.

ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ບໍລິສັດຫລັກຊັບ ແລະ ບໍລິສັດປະກັນໄພ ໃນຂອບເຂດທົ່ວປະເທດຊາບວ່າ ເພື່ອໃຫ້ການລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ (CTR) ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ມີຄວາມສະດວກວ່ອງໄວ, ຖືກຕ້ອງຕາມແບບຟອມ ຫຼື ລະບົບ ທີ່ ສຕຟງ ພັດທະນາອອກແຕ່ລະໄລຍະ ແລະ ສາມາດນຳໃຊ້ຂໍ້ມູນ CTR ເຂົ້າໃນວຽກງານການວິເຄາະຂ່າວກອງທາງດ້ານການເງິນ ທີ່ກ້າວໄປສູ່ການສົ່ງໃຫ້ອົງການສືບສວນ-ສອບສວນ. ສຕຟງ ຈຶ່ງໄດ້ປັບປຸງຮູບແບບການສົ່ງລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດຜ່ານລະບົບລາຍງານອອນລາຍ (ລາຍລະອຽດໄດ້ປັບປຸງຕາມຂໍ້ 03 ຂອງຄູ່ມືການນຳໃຊ້ສະບັບປັບປຸງປີ 2022 ຕາມທີ່ຢູ່: bit.ly/38LS6HZ ຫລື QR Code ດ້ານລຸ່ມນີ້). ພ້ອມດຽວກັນນີ້, ໃຫ້ເລີ່ມປະຕິບັດນຳໃຊ້ເຂົ້າໃນການລາຍງານ CTR ປະຈຳເດືອນ ພຶດສະພາ 2022 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດຕາມເນື້ອໃນຈົດໃຈຂ້າງເທິງນີ້ດ້ວຍ.

**ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ**

ສຳນັກງານຂໍ້ມູນຕ້ານການຟອກເງິນ

ແພງສີ ແພງເມືອງ

ສະແກນຄູ່ມືການນຳໃຊ້

**ສອບຖາມຂໍ້ມູນເພີ່ມຕື່ມ:** ພະແນກວິເຄາະຂ່າວກອງ, ເບີໂທ 021 264506, ທ ນິລັນດອນ ເພັດມະນີວົງ ເບີໂທ 020 94424771